**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

--------ໜໜໜໜ ☆ ໜໜໜໜ--------

**ສໍານັກງານນາຍົກລັດຖະມົນຕີ**

ເລກທີ 057 / ນຍ

ນະຄອນຫຼວງວຽງຈັນ, ວັນທີ 26.02. 2009

# ດໍາລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກໍາມະການແຫ່ງຊາດ ເພື່ອຜູ້ອາຍຸສູງ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ໃບສະເໜີ ຂອງ ທ່ານລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຜູ້ປະຈໍາການ ຄະນະກໍາມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ສະບັບເລກທີ 4257/ຮສສ, ລົງວັນທີ 20 ຕຸລາ 2008;
- ອີງຕາມ ໃບສະເໜີ ຂອງ ທ່ານລັດຖະມົນຕີ ປະຈໍາ ສໍານັກງານນາຍົກລັດຖະມົນຕີ, ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 143/ທປຄ.ກພລ, ລົງວັນທີ 30 ທັນວາ 2008.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ ອອກດໍາລັດ:**

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດໍາລັດສະບັບນີ້ກໍານົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງ ຄະນະກໍາມະການແຫ່ງຊາດ ເພື່ອຜູ້ອາຍຸສູງ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກໍາມະການແຫ່ງຊາດເພື່ອຜູ້ອາຍຸສູງ ຂຽນຫຍໍ້ **"ຄ.ຊ.ອ.ສ"** ເປັນອົງການຈັດຕັ້ງໜຶ່ງຂອງລັດຖະບານ, ມີພາລະບົດບາດຊ່ວຍລັດຖະບານ ແລະ ນາຍົກລັດຖະມົນຕີ ພົວພັນປະສານສົມທົບກັບ ບັນດາກະຊວງ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການປົກປ້ອງ, ຄຸ້ມຄອງ, ຊ່ວຍເຫຼືອ, ຟື້ນຟູ, ບໍາບັດ ແລະ ພັດທະນາຄຸນນະພາບຊີວິດຂອງຜູ້ອາຍຸສູງໃນຂອບເຂດທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

1. ເປັນເຈົ້າການປະສານງານສົມທົບກັບກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງສັງຄົມຂັ້ນສູນກາງ ເພື່ອຄົ້ນຄວ້າ ແລະ ນຳສະເໜີຕໍ່ລັດຖະບານພິຈາລະນາກ່ຽວກັບນະໂຍບາຍ, ຍຸດທະສາດ, ແຜນການ, ແຜນງານ, ໂຄງການ, ກົນໄກ, ລະບອບລະບຽບການຕ່າງໆ ທີ່ມີຕໍ່ຜູ້ອາຍຸສູງ; ປະສານສົມທົບກັບອົງ ການຈັດຕັ້ງຕ່າງໆ ເຫຼົ່ານີ້ ຊີ້ນຳ, ຈັດຕັ້ງປະຕິບັດ ພາຍຫຼັງລັດຖະບານຮັບຮອງເອົາແລ້ວ;
2. ຕິດຕາມ, ແນະນຳ, ຊຸກຍູ້, ກວດກາບັນດາກະຊວງ, ຂະແໜງການ, ອົງການຈັດຕັ້ງສັງຄົມ, ການຈັດຕັ້ງເສດຖະກິດ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບຜູ້ອາຍຸສູງ;
3. ສົມທົບກັບກະຊວງ, ອົງການທີ່ກ່ຽວຂ້ອງ ເພື່ອປົກປ້ອງສິດຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍກ່ຽວກັບຜູ້ອາຍຸສູງ; ໃຫ້ຄວາມຊ່ວຍເຫຼືອ ແລະ ເບິ່ງແຍງດູແລຊີວິດການເປັນຢູ່ ທັງທາງດ້ານວັດຖຸ ແລະ ຈິດໃຈໃຫ້ຜູ້ອາຍຸສູງ ໃຫ້ນັບມື້ດີຂຶ້ນ;
4. ໂຄສະນາ, ປຸກລະດົມຂົນຂວາຍທົ່ວສັງຄົມ ໃຫ້ຮັບຮູ້ເຖິງສະພາບຄວາມຈຳເປັນ ແລະ ຄວາມມຸ່ງມາດປາຖະໜາຂອງຜູ້ອາຍຸສູງໃນແຕ່ລະໄລຍະ. ສະເໜີ, ຮຽກຮ້ອງໄປຍັງກະຊວງ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ເອົາໃຈໃສ່ຕໍ່ວຽກງານຜູ້ອາຍຸສູງໃນທົ່ວສັງຄົມ ທີ່ນອນຢູ່ໃນຄວາມຮັບຜິດຊອບຄຸ້ມຄອງຂອງຕົນ. ການກຳນົດຍຸດທະສາດ, ນະໂຍບາຍ, ຫຼືການພັດທະນາພື້ນຖານໂຄງລ່າງເຕັກນິກຕ່າງໆ ໃນຂົງເຂດ, ຂະແໜງການ ແລະ ທ້ອງຖິ່ນຂອງຕົນໃຫ້ຄຳນຶງ ແລະ ຄິດໄລ່ເຖິງຄວາມຫຍຸ້ງຍາກລຳບາກຂອງຜູ້ອາຍຸສູງ;
5. ສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ຈັດຕັ້ງກິດຈະກຳຕ່າງໆ ຂອງສັງຄົມ ເພື່ອຜູ້ອາຍຸສູງ, ໃນນີ້ລວມທັງປຸກລະດົມ, ຂົນຂວາຍທຶນຮອນ, ເຄື່ອງຂອງບັນເທົາທຸກ ໃຫ້ແກ່ຜູ້ອາຍຸສູງໃນການສະເຫຼີມສະຫຼອງວັນສຳຄັນຕ່າງໆ ກ່ຽວກັບຜູ້ອາຍຸສູງ;
6. ສະໜອງຂໍ້ມູນ-ຂ່າວສານໃຫ້ແກ່ສັງຄົມ, ບັນດາອົງການຈັດຕັ້ງສັງຄົມຂອງຜູ້ອາຍຸສູງ ແລະ ອົງການຈັດຕັ້ງສາກົນຕ່າງໆ; ເກັບກຳສັງລວມຄວາມມຸ່ງມາດປາຖະໜາ, ຄຳສະເໜີຂອງສະມາຄົມ ຫຼື ບຸກຄົນ, ຜູ້ອາຍຸສູງ ເພື່ອສະເໜີລັດຖະບານ, ນາຍົກລັດຖະມົນຕີ ຫຼື ລັດຖະມົນຕີ, ປະທານອົງການທຽບເທົ່າ ພິຈາລະນາແກ້ໄຂ;
7. ພິຈາລະນາປະກອບຄຳຄິດຄຳເຫັນເປັນລາຍລັກອັກສອນໃຫ້ບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການຈັດຕັ້ງຕ່າງໆ ທີ່ກ່ຽວຂ້ອງ ກ່ຽວກັບການສະເໜີຂໍສ້າງຕັ້ງສະມາຄົມ, ມູນນິທິ, ກອງທຶນ ແລະ ອື່ນໆ ກ່ຽວກັບຜູ້ອາຍຸສູງ; ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ສະມາຄົມ, ມູນນິທິ, ກອງທຶນ ແລະ ອື່ນໆ ກ່ຽວກັບຜູ້ອາຍຸສູງ ເຄື່ອນໄຫວຖືກຕ້ອງຕາມແນວທາງນະໂຍບາຍ ແລະ ລະບຽບກົດໝາຍ; ຊຸກຍູ້, ສົ່ງເສີມ ອົງການຈັດຕັ້ງທາງສັງຄົມກ່ຽວກັບຜູ້ອາຍຸສູງ ເຄື່ອນໄຫວມີປະສິດທິພາບ, ຊ່ວຍເຫຼືອເຊິ່ງກັນແລະກັນ ແລະ ການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກ;

8. ຄົ້ນຄວ້າຖະແຫຼງການຮ່ວມ, ອານຸສັນຍາ, ສັນຍາ, ສົນທິສັນຍາ ແລະ ເອກະສານອື່ນໆ ຂອງພາກພື້ນອາຊຽນ, ອາຊີ-ປາຊີຟິກ, ສາກົນ ແລະ ສະຫະປະຊາຊາດ ກ່ຽວກັບວຽກງານທີ່ພົວພັນກັບຜູ້ອາຍຸສູງ;
9. ພົວພັນປະສານງານ ແລະ ຊຸກຍູ້ອົງການຈັດຕັ້ງຂອງລັດ, ເອກະຊົນ ແລະ ສັງຄົມ ເພື່ອໃຫ້ທຸກພາກສ່ວນໄດ້ປະກອບສ່ວນໃນການຊ່ວຍເຫຼືອ ແລະ ພັດທະນາຜູ້ອາຍຸສູງ ຢູ່ໃນ ສ.ປ.ປ. ລາວ;
10. ພົວພັນ ແລະ ຮ່ວມມືກັບບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນຕ່າງໆ ໃນພາກພື້ນກໍ່ຄືໃນໂລກ ເພື່ອຍາດແຍ່ງທຶນຮອນ ແລະ ດ້ານວິຊາການ ເຂົ້າໃນການພັດທະນາຊີວິດການເປັນຢູ່ຂອງຜູ້ອາຍຸສູງ;
11. ເຂົ້າຮ່ວມກອງປະຊຸມສຳມະນາ, ຝຶກອົບຮົມທັງພາຍໃນ ແລະ ຕ່າງປະເທດກ່ຽວກັບວຽກງານຜູ້ອາຍຸສູງ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 4. ຂອບເຂດສິດ**

1. ຄົ້ນຄວ້າ ແລະ ນຳສະເໜີອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອປັບປຸງ, ແຕ່ງຕັ້ງ, ຍົກຍ້າຍ, ຍ້ອງຍໍຕໍ່ບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງ ທີ່ເຄື່ອນໄຫວດີເດັ່ນ ກ່ຽວກັບວຽກຜູ້ອາຍຸສູງ. ພ້ອມນີ້, ກໍ່ສະເໜີພາກສ່ວນ ຫຼື ອົງການກ່ຽວຂ້ອງທີ່ມີສິດອຳນາດ ເພື່ອປະຕິບັດວິໄນຕໍ່ບຸກຄົນ ຫຼື ອົງການຈັດຕັ້ງໃດທີ່ເຄື່ອນໄຫວຂັດກັບແນວທາງນະໂຍບາຍ, ລະບຽບກົດໝາຍຂອງລັດ ແລະ ລະບຽບການຕ່າງໆກ່ຽວກັບຜູ້ອາຍຸສູງ;
2. ຄົ້ນຄວ້າ, ຕົກລົງ, ຮັບຮອງເອົາແຜນການເຄື່ອນໄຫວວຽກງານປະຈຳປີ, 06 ເດືອນ, 03 ເດືອນ ແລະ ປະຈຳເດືອນຂອງ ຄ.ຊ.ອ.ສ; ຊີ້ນຳຫ້ອງການຊ່ວຍວຽກຂອງຕົນ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ;
3. ຄົ້ນຄວ້າ, ປັບປຸງ ແລະ ສ້າງລະບຽບການຄຸ້ມຄອງ, ຊ່ວຍເຫຼືອຜູ້ອາຍຸສູງ ບົນພື້ນຖານນະໂຍບາຍ ແລະ ລະບຽບກົດໝາຍວາງອອກ;
4. ຊຸກຍູ້, ຕິດຕາມ, ກວດກາການປະຕິບັດລະບຽບການ ຂອງ ອົງການຈັດຕັ້ງຕ່າງໆ ກ່ຽວກັບຜູ້ອາຍຸສູງ ເພື່ອເສີມຂະຫຍາຍດ້ານດີ ແລະ ແກ້ໄຂດ້ານຈຳກັດ ເພື່ອປັບປຸງໃຫ້ສອດຄ່ອງກັບລະບຽບກົດໝາຍ;
5. ຄຸ້ມຄອງ ແລະ ນຳໃຊ້ການເງິນ-ງົບປະມານ ແລະ ອຸປະກອນຮັບໃຊ້ວຽກງານທີ່ລັດ ແລະ ອົງການຈັດຕັ້ງອື່ນໆ ມອບໃຫ້ຢ່າງມີປະສິດທິຜົນ ແລະ ຕາມລະບຽບກົດໝາຍກຳນົດ;
6. ພົວພັນ, ພົບປະ ແລະ ເຮັດວຽກກັບອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ;
7. ຕັດສິນບັນຫາຕ່າງໆ ທີ່ນອນຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ປະຕິບັດສິດອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກຊ່ວຍວຽກ**

ໂຄງປະກອບກົງຈັກຊ່ວຍວຽກ ຂອງ ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ປະກອບມີ 02 ຂັ້ນຄື: ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ.

**5.1 ຂັ້ນສູນກາງ**

ກົມບຳນານ, ເສຍອົງຄະ ແລະ ພິການ ຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຫ້ອງການປະສານງານແຫ່ງຊາດເພື່ອຜູ້ອາຍຸສູງ ຂັ້ນສູນກາງ (ຂຽນຫຍໍ້: "ຄ.ຊ.ອ.ສ").

**5.2 ຂັ້ນທ້ອງຖິ່ນ** ປະກອບມີ: 03 ຂັ້ນຄື:

**5.2.1** ພະແນກ ແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນ ເປັນຫ້ອງການປະສານງານແຫ່ງຊາດເພື່ອຜູ້ອາຍຸສູງແຂວງ (ຂຽນຫຍໍ້ "ຫ.ປ.ສ.ຂ") ແລະ ເປັນຫ້ອງການປະສານງານແຫ່ງຊາດເພື່ອຜູ້ອາຍຸສູງ ນະຄອນຫຼວງວຽງຈັນ (ຂຽນຫຍໍ້ "ຫ.ປ.ສ.ນ.ວ");

**5.2.2** ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ເທດສະບານ (ຖ້າມີ) ເປັນຫ້ອງການປະສານງານແຫ່ງຊາດ ເພື່ອຜູ້ອາຍຸສູງເມືອງ (ຂຽນຫຍໍ້: "ຫ.ປ.ສ.ມ") ຫຼື ຫ້ອງການປະສານງານແຫ່ງຊາດ ເພື່ອຜູ້ອາຍຸສູງ ເທດສະບານ (ຂຽນຫຍໍ້: "ຫ.ປ.ສ.ທ.ບ");

**5.2.3** ຫ້ອງການປົກຄອງບ້ານ ເປັນຈຸດປະສານງານວຽກງານຜູ້ອາຍຸສູງ ຂັ້ນບ້ານ.

**ມາດຕາ 6. ໂຄງປະກອບບຸກຄະລາກອນ**

**6.1 ໂຄງປະກອບບຸກຄະລາກອນ ຂັ້ນສູນກາງ**

ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງຂັ້ນສູນກາງ ປະກອບດ້ວຍ:

1. ທ່ານ ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ ເປັນປະທານ;
2. ທ່ານ ລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານທັງເປັນຜູ້ປະຈຳການ;
3. ທ່ານ ກຳມະການ ສູນກາງແນວລາວສ້າງຊາດ ເປັນກຳມະການ;
4. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງສາທາລະນະສຸກ ເປັນກຳມະການ;
5. ທ່ານ ຮອງປະທານສູນກາງ ສະຫະພັນແມ່ຍິງລາວ ເປັນກຳມະການ;
6. ທ່ານ ຮອງປະທານ ອົງການກາແດງລາວ ເປັນກຳມະການ;
7. ທ່ານ ຫົວໜ້າຫ້ອງການ ກະຊວງສາທາລະນະສຸກ ເປັນກຳມະການ;
8. ທ່ານ ຫົວໜ້າຫ້ອງການ ສະຫະພັນນັກຮົບເກົ່າແຫ່ງຊາດລາວ ເປັນກຳມະການ;
9. ທ່ານ ຫົວໜ້າກົມບຳນານ, ເສຍອົງຄະ ແລະ ພິການ ເປັນກຳມະການ ທັງເປັນຫົວໜ້າຫ້ອງການປະສານງານແຫ່ງຊາດ ເພື່ອຜູ້ອາຍຸສູງ.

**6.2 ໂຄງປະກອບບຸກຄະລາກອນ ຂັ້ນທ້ອງຖິ່ນ**

- ປະທານ, ຮອງປະທານ ແລະ ຄະນະ ຂອງ ຄະນະກຳມະການເພື່ອຜູ້ອາຍຸສູງຂັ້ນແຂວງ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນເປັນຜູ້ກຳນົດ ບົນພື້ນຖານສອດຄ່ອງກັບສະພາບຕົວຈິງຂອງທ້ອງຖິ່ນ ແລະ ສອດຄ່ອງກັບໂຄງປະກອບບຸກຄະລາກອນຂັ້ນສູນກາງ;

- ປະທານ, ຮອງປະທານ ແລະ ຄະນະ ຂອງ ຄະນະກຳມະການເພື່ອຜູ້ອາຍຸສູງຂັ້ນເມືອງ ແມ່ນເຈົ້າເມືອງ, ຫົວໜ້າເທດສະບານ (ຖ້າມີ) ເປັນຜູ້ກຳນົດ; ບົນພື້ນຖານສອດຄ່ອງກັບສະພາບຕົວຈິງຂອງທ້ອງຖິ່ນ ແລະ ສອດຄ່ອງກັບໂຄງປະກອບບຸກຄະລາກອນຂັ້ນແຂວງ;
- ຫົວໜ້າ, ຮອງຫົວໜ້າ ແລະ ຄະນະ ຂອງ ຄະນະກຳມະການເພື່ອຜູ້ອາຍຸສູງຂັ້ນບ້ານ ແມ່ນນາຍບ້ານເປັນຜູ້ກຳນົດ ບົນພື້ນຖານສະພາບ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງ.

## ໝວດທີ IV

## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 7. ແບບແຜນວິທີເຮັດວຽກ**

ຄະນະກຳມະການແຫ່ງຊາດເພື່ອຜູ້ອາຍຸສູງ ເຄື່ອນໄຫວ ແລະ ດຳເນີນງານຕາມຫຼັກການດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ປະຕິບັດຕາມລະບອບຫົວໜ້າດຽວ, ເສີມຂະຫຍາຍຫົວຄິດປະດິດສ້າງໃນການເຮັດວຽກງານ;
2. ເຮັດວຽກງານມີແຜນການ, ແຜນງານ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ, ມີເປົ້າໝາຍແຕ່ລະໄລຍະ, ປະສານສົມທົບຢ່າງລະອຽດກັບອົງການບໍລິຫານລັດຂັ້ນຕ່າງໆ;
3. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບ, ຖອດຖອນບົດຮຽນ, ຕີລາຄາຜົນໄດ້, ຜົນເສຍ ພ້ອມທັງປະຕິບັດລະບອບສ່ອງແສງລາຍງານຢ່າງເຂັ້ມງວດ;
4. ປະຕິບັດລະບອບປະຊຸມສ່ອງແສງເປັນແຕ່ລະໄລຍະ (ປະຈຳເດືອນ, ໄຕມາດ, ເຄິ່ງປີ ແລະ ປະຈຳປີ) ປະຕິບັດລະບອບລາຍງານໃຫ້ຂັ້ນເທິງຂອງຕົນ ແລະ ລັດຖະບານເປັນປົກກະຕິ.

## ໝວດທີ V

## ບົດບັນຍັດສຸດທ້າຍ

**ມາດຕາ 8. ງົບປະມານ ແລະ ກາປະທັບ**

1. ງົບປະມານຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ຂອງ ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ແມ່ນໄດ້ມາຈາກ: ງົບປະມານຂອງລັດຖະບານ, ການຊ່ວຍເຫຼືອຂອງພາກສ່ວນຕ່າງໆ ຂອງສັງຄົມ ທັງພາຍໃນ, ຕ່າງປະເທດ ແລະ ບັນດາອົງການຈັດຕັ້ງສາກົນອື່ນໆ;
2. ຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ, ຫ້ອງການປະສານງານແຫ່ງຊາດ ເພື່ອຜູ້ອາຍຸສູງ ມີກາປະທັບເປັນຂອງຕົນເອງ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 9. ການຜັນຂະຫຍາຍ**

ມອບໃຫ້ ປະທານຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ເປັນຜູ້ກຳນົດລະອຽດກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຫ້ອງການປະສານງານແຫ່ງຊາດ ເພື່ອຜູ້ອາຍຸສູງ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ທີ່ລະບຸຢູ່ໃນມາດຕາ 5 ຂອງດຳລັດສະບັບນີ້.

**ມາດຕາ 10. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດສະບັບເລກທີ **153/ນຍ**, ລົງວັນທີ **25** ກໍລະກົດ **2001** ວ່າດ້ວຍການສ້າງຕັ້ງຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

**ບົວສອນ ບຸບຜາວັນ**